ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ: 11 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 18 ມີນາ 2019

ສຳນັກງານ ຄຄຊ
ລົງເລກ 0270
ວັນທີ 21 MAR 2019
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 25/02-01/03/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,14% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາອອກມາບໍ່ດີ ເຫັນໄດ້ຈາກຕົວເລກດັດຊະນີຂະແໜງອຸດສາຫະກຳໂຮງງານຂອງສະຫະລັດອາເມລິກາ ຫຼຸດລົງຢູ່ໃນລະດັບ 54,2 ຈຸດ ໃນເດືອນ 02/2019 ຈາກລະດັບ 56,6 ຈຸດໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານປະຈຳເດືອນ ຫຼຸດລົງ 11,2% ຈາກທີ່ເພີ່ມຂຶ້ນ 4,0% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 18-22/02/2019 | ອາທິດນີ້ 25/02-01/03/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1343 | 1,1359 | -0,14% |
| ເຢນ/ໂດລາ | 110,83 | 111,89 | -0,95% |
| ບາດ/ໂດລາ | 31,350 | 31,720 | -1,17% |
| ເປໂຊ/ໂດລາ | 52,17 | 51,83 | 0,66% |
| ຣູເປັຍ/ໂດລາ | 14.060,00 | 14.110,00 | -0,35% |
| ໂດລາສິງກະໂປ/ໂດລາ | 1,3531 | 1,3524 | 0,05% |
| ຢວນ/ໂດລາ | 6,7225 | 6,7058 | 0,25% |

### 1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

- ລາຄານໍ້າມັນ ຫຼຸດລົງ 2,43% ເປັນ 57,50 ໂດລາ/ບາເຣວ ເນື່ອງຈາກການສະໜອງນໍ້າມັນເພີ່ມຂຶ້ນຊຶ່ງເຫັນໄດ້ຈາກປະເທດແຄນນາດາ ໄດ້ເພີ່ມເປົ້າໝາຍການຜະລິດນໍ້າມັນດິບຂຶ້ນຈາກ 100.000 ບາເຣວ/ວັນ ເປັນ 3,66 ລ້ານບາເຣວ/ວັນ. ພ້ອມກັນນັ້ນ, ກໍາລັງການຜະລິດນໍ້າມັນດິບຂອງປະເທດລີເບຍ ມີແນວໂນ້ມເພີ່ມຂຶ້ນ ເນື່ອງຈາກລັດຖະບານຂອງປະເທດລີເບຍ ໄດ້ຕົກລົງກັບບໍລິສັດນໍ້າມັນແຫ່ງຊາດ ເພື່ອເຮັດໃຫ້ແຫຼ່ງຜະລິດນໍ້າມັນດິບ El Sharara ຊຶ່ງມີກໍາລັງການຜະລິດ 315.000 ບາເຣວ/ວັນ ສາມາດດໍາເນີນງານໄດ້ອີກຄັ້ງ ພາຍຫຼັງທີ່ຖືກປິດປັບປຸງແຕ່ເດືອນ 12/2018;
- ລາຄາຄໍາ ຫຼຸດລົງ 1,15% ເປັນ 1.307,90 ໂດລາ/ອອນ ເນື່ອງຈາກຄ່າຂອງເງິນໂດລາມີຄວາມຜັນຜວນ ເຮັດໃຫ້ນັກລົງທຶນເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາ ເພື່ອເກງກໍາໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0,09% ແລະ ອ່ອນຄ່າລົງ 0,63% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,13% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,36% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 18-22/02/2019 | | | ອາທິດນີ້ 25/2-01/03/2019 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.602,54 | 8.632.19 | 8.617,82 | 8.610,66 | 8.641,33 | 8.625,83 | -0,09% | -0,11% | -0,09% | -0,10% | -0,16% | -0,13% |
| ບາດ | 276,60 | 278,55 | 278,02 | 275,16 | 276,70 | 276,28 | 0,53% | 0,67% | -0,63% | -3,26% | -3,34% | -3.36% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈໍາອາທິດນີ້ ເພີ່ມຂຶ້ນ 1,13% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຖານເງິນຕາ ເພີ່ມຂຶ້ນ 15,58%
- ປະລິມານເງິນ M2 ເພີ່ມຂຶ້ນ 0,14% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,90%

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈໍາອາທິດ (22-28/02/2019) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 8,22 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 41,03 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 32,81 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 785,10 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 125,67 ລ້ານບາດ ແລະ ຂາຍເງິນບາດໄດ້ 910,77 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ເພີ່ມຂຶ້ນ 17,36% ແລະ ເງິນບາດ ເພີ່ມຂຶ້ນ 21,48%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໂດຍການຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈໍານວນ 8,63 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈໍານວນ 26,50 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈໍານວນ 19,76 ລ້ານໂດລາ ແລະ ເງິນບາດ ຈໍານວນ 303,97 ລ້ານບາດ;

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລັ່ຍຖ່ວງນໍ້າໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ໄດ້ຂາຍເງິນໂດລາສຸດທິ ຈຳນວນ 1,67 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 137,87 ລ້ານບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີຜ່ານມາ 15-21/02/2019 | | ອາທິດນີ້ 22-28/02/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **30,34** | **210,29** | **41,03** | **125,67** | **35,23%** | **-40,24%** |
| - ທ/ຄທຸລະກິດລັດ | 14,06 | 58,70 | 18,50 | 60,72 | 31,58% | 3,44% |
| - ທ/ຄທຸລະກິດອື່ນໆ | 16,28 | 151,59 | 22,53 | 64,95 | 38,39% | -57,15% |
| **2. ການຂາຍເງິນຕາຕ່າງປະເທດ** | **32,58** | **642,87** | **32,81** | **910,77** | **0,71%** | **41,67%** |
| - ທ/ຄທຸລະກິດລັດ | 13,85 | 216,61 | 11,99 | 340,94 | -13,43% | 57,40% |
| - ທ/ຄທຸລະກິດອື່ນໆ | 18,73 | 426,26 | 20,82 | 569,83 | 11,16% | 33,68% |
| **ຊື້-ຂາຍສຸດທິ ທທກ** | **-2,24** | **-432,58** | **8,22** | **-785,10** | **-466,96%** | **81,49%** |
| - ຜິດດ່ຽງຊື້-ຂາຍ | -7,38% | -205,71% | 20,03% | -624,73% | -371,47% | 203,70% |
| **- ມູນຄ່າການຊື້-ຂາຍ** | **62,92** | **853,16** | **73,84** | **1.036,44** | **17,36%** | **21,48%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **1,60** | **-22,50** | **-8,63** | **-26,50** | | |
| - ທຫລ ຊື້ຈາກ ທທກ | 6,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 3,40 | 22,50 | 8,63 | 26,50 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **6,33** | **121,20** | **19,76** | **303,97** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-1,67** | **-137,87** | **-1,67** | **-137,87** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 1,67 | 137,87 | 1,67 | 137,87 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2019 ຄາດວ່າຈະຢູ່ໃນລະດັບ 1,42%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 71,85 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (22-28/02/2019) ໃນນັ້ນ, ກະແສເງິນໄຫຼອອກ ມີຈຳນວນ 200,87 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 108,07 ລ້ານໂດລາສະຫະລັດ, ຊຳລະເງິນກູ້ພາກລັດຖະບານ ຈຳນວນ 40,69 ລ້ານໂດລາສະຫະລັດ ແລະ ຊາລະຄ່າບໍລິການ ຈານວນ 27,25 ລ້ານໂດລາສະຫະລັດ).ກະແສເງິນໄຫຼເຂົ້າ ມີຈຳນວນ 129,02 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 79,63 ລ້ານໂດລາສະຫະລັດ, ຮັບຈາກການກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 28,66 ລ້ານໂດລາສະຫະລັດ, ຮັບຈາກການໃຫ້ບໍລິການ ຈຳນວນ 7,91 ລ້ານໂດລາສະຫະລັດ ແລະ ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 6,34 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 696 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 47 ສະບັບ , ລວມມູນຄ່າໂອນທັງໝົດ 334,67 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 33,46 ຕື້ກີບ ເທົ່າກັບ 11,11%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/02/2019) ມີທັງໝົດ 4.525 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 4.425 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 864 ຕື້ກີບ ຈາກ 1.200,47 ຕື້ກີບ ມາເປັນ 2.064,87 ຕື້ກີບ ເທົ່າກັບ 72,00%;
- **ກະຊວງການເງິນ:** ການເຄື່ອນໄຫວຂອງກະຊວງການເງິນມີການໂອນເງິນຈຳນວນ 100 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 150,51 ຕື້ກີບ ຈາກ 34,24 ຕື້ກີບ ມາເປັນ 184,75 ຕື້ກີບ ເທົ່າກັບ 439,57%.

4. **ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 805,99 ຈຸດ ເພີ່ມຂຶ້ນ ຈາກ 803,29 ຈຸດ ຫຼື ເທົ່າກັບ 0,34% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 297,200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,48 ຕື້ກີບ ເພີ່ມຂຶ້ນ 108,44% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນ ເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 61,13%. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ PCD ແລະ BCEL ແລະ ສາເຫດທີ່ເຮັດໃຫ້ມູນຄ່າການຊື້-ຂາຍຮຸ້ນເພີ່ມຂຶ້ນ ແມ່ນເນື່ອງຈາກການເທຂາຍຮຸ້ນ EDL-GEN ໃນລະດັບລາຄາທີ່ຫຼຸດລົງຂອງຜູ້ລົງທຶນຕ່າງປະເທດ ປະເພດສະຖາບັນ.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ(15-21/02/2019) | | | ອາທິດນີ້(22-28/02/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 74.400 | 440.010.000 | 5.900 | **214.400** | **1.276.365.000** | **6.100** | **188,17** | **190,08** | **3,39** |
| **EDL-GEN** | 12.000 | 46.879.000 | 3.910 | **29.000** | **113.193.000** | **3.900** | **141,67** | **141,46** | **-0,26** |
| **LWPC** | - | - | 7.150 | - | - | **7.150** | - | - | - |
| **PTL** | 4.200 | 3.402.000 | 810 | **5.500** | **4.069.000** | **730** | **30,95** | **19,61** | **-9,88** |
| **SVN** | - | - | 2.000 | **45.300** | **90.600.000** | **2.000** | - | - | - |
| **PCD** | 1.100 | 1.133.000 | 1.030 | **800** | **792.000** | **1.080** | **-27,27** | **-30,10** | **4,85** |
| **LCC** | - | - | 2.350 | - | - | **2.270** | - | - | **-3,40** |
| **MHTL** | 75.100 | 221.490.000 | 2.950 | **200** | **590.000** | **2.950** | **-99,73** | **-99,73** | - |
| **LAT** | 700 | 507.500 | 725 | **2.000** | **1.450.000** | **725** | **185,71** | **185,71** | - |
| ທັງໝົດ | 167.500 | 713.421.500 | | 297.200 | 1.487.059.000 | | 77,43 | 108,44 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ສຳເລັດການເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຜ່ານຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ພາຍຫຼັງທີ່ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 06 ຂອງສະພາແຫ່ງຊາດຊຸດທີ VIII; ❷ ກອງປະຊຸມ "ສ້າງຄວາມເຂັ້ມແຂງໃນການຕ້ານອາສະຍະກຳຂ້າມຊາດທີ່ມີການຈັດຕັ້ງໂດຍສະເພາະ ບັນຫາຢາເສບຕິດ, ການຄ້າມະນຸດ, ການຟອກເງິນ ແລະ ການປະມວນກົດໝາຍອາຍາ"; ❸ ກອງປະຊຸມເຈົ້າໜ້າທີ່ອາວຸໂສ ແລະ ກອງປະຊຸມທາງການຂອງຄະນະກຳມະທິການຮ່ວມມື ລາວ-ກຳປູເຈຍ;
- **ສຳເລັດການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມປຶກສາຫາລືປັບປຸງຮ່າງດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ; ❷ ກອງປະຊຸມປຶກສາຫາລືວຽກງານຫັນແຮ່ກເປັນທຶນສະໄໝ; ❸ ກອງປະຊຸມສະຫຼຸບຜົນການມາຕິດຕາມສະພາບເສດຖະກິດມະຫາພາກຂອງ ສປປ ລາວ ປະຈຳປີ 2018; ❹ ກອງປະຊຸມຜູ້ຖືຮຸ້ນປະຈຳປີ 2018 ຂອງບັນດາບໍລິສັດຈົດທະບຽນ; ❺ ກອງປະຊຸມສະພາບໍລິຫານຂອງທະນາຄານສົ່ງເສີມກະສິກຳ; ❻ ຈັດຝຶກອົບຮົມເພື່ອສ້າງຄວາມເຂົ້າໃຈກ່ຽວກັບ "ການນຳໃຊ້ລະບົບ Assist ຂອງຂະແໜງການຄ້າດ້ານບໍລິການໃນຂອບອາຊຽນ; ❼ ຈັດສຳມະນາວຽກງານຊາວໜຸ່ມໃນຫົວຂໍ້ "ການຄຸ້ມຄອງລະບົບຊຳລະສະສາງໃນ ສປປ ລາວ ທ່າອ່ຽງ ແລະ ສິ່ງທ້າທາຍ" ແລະ ❽ ຈັດພິທີມອບໃບຍ້ອງຍໍໃຫ້ແກ່ທ່ານ Lim Wai Hoong, ຜູ້ອຳນວຍການທະນາຄານເມແບັງ ປະຈຳ ສປປ ລາວ;
- **ສຳເລັດວຽກງານວິຊາສະເພາະ:** ❶ ສຳເລັດການອອກຂໍ້ຕົກລົງວ່າດ້ວຍການຮັບຮູ້ການໂອນຊັບສິນ, ໜີ້ສິນ ແລະ ທຶນທັງໝົດ ຂອງທະນາຄານ ANZ ສາຂາລາວ; ❷ ສຳເລັດການລົງກວດກາທະນາຄານ ແຄນນາເດຍ ລາວ ຈຳກັດ ຕາມແຜນປະຈຳປີ 2019; ❸ ສຳເລັດການແຈ້ງການເຖິງຜູ້ປະກອບການສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ພະນັກງານ, ທະຫານ, ຕຳຫຼວດ; ຊາວຄ້າຂາຍ ພໍ່ແມ່ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ກ່ຽວກັບທະນາຄານແຫ່ງ ສປປ ລາວ ອະນຸຍາດໃຫ້ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ດຳເນີນທຸລະກິດເປັນເງິນກີບເທົ່ານັ້ນ ແລະ ສຳເລັດແຈ້ງການດັ່ງກ່າວໃຫ້ບັນດາ ສາຂາ ທຫລ ປະຈຳພາກ; ❹ ສຳເລັດການພິຈາລະນາອະນຸຍາດໃຫ້ບໍລິສັດ ໄຟຟ້ານ້ຳງື່ມ 02 ຈຳກັດ ອອກຈຳໜ່າຍຮຸ້ນກູ້ຢູ່ປະເທດໄທໃນມູນຄ່າບໍ່ເກີນ 6.000 ລ້ານບາດ ຫຼື ທຽບເທົ່າ 1.560 ຕື້ກີບ ແລະ ❺ ສຳເລັດອະນຸມັດເຫັນດີໃຫ້ບໍລິສັດຈົດທະບຽນ 01 ແຫ່ງ.
- **ສຳເລັດການຕ້ອນຮັບ:** ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຈາກຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບແຫ່ງປະເທດໄທ ແລະ ຄະນະຊ່ຽວຊານຈາກອົງການຕິດຕາມຄົ້ນຄວ້າສະພາບເສດຖະກິດມະຫາພາກ ອາຊຽນ +3 AMRO.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຈັດຕັ້ງປະຕິບັດ 08 ມາດຕະການຊຸກຍູ້ເສດຖະກິດທີ່ຕິດພັນກັບ ທຫລ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- **ກະກຽມການເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ທີ່ປະເທດໄທ; ❷ ກອງປະຊຸມໃຫຍ່ປະຈຳປີຂອງບັນດາສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງໂຄງການການເງິນຈຸລະພາກການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃນເຂດຊົນນະບົດ (MRA-AFP);

- **ກະກຽມການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ III ປະຈຳປີ 2018;❷ ກອງປະຊຸມຮ່ວມກັບຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ກ່ຽວກັບສະພາບລາຄາຮຸ້ນຂອງບໍລິສັດຈົດທະບຽນ 01 ແຫ່ງ ທີ່ຕ່ຳກວ່າມູນຄ່າກຳນົດ, ການກຳນົດລາຄາປິດສະເພາະ (SQ) ແລະ ການຮ່າງລະບຽບການຈົດທະບຽນຂອງ ຕລຊລ;❸ ຈັດສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ"; ❹ ກອງປະຊຸມສະພາວິຊາການ ສະຖາບັນການທະນາຄານ ສະໄໝສາມັນຄັ້ງທີ I ປະຈຳປີ 2019 ແລະ ❺ ຈັດພິທີການສ້າງຂະບວນການສະເຫຼີມສະຫຼອງວັນແມ່ຍິງສາກົນ ວັນທີ 08 ມີນາ 2019.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ